

# Reduced vulnerability of returnee migrant workers through linkages to employment opportunities and integration into local economic development in response to COVID-19 Project

## Project at a Glance

### Donor Contribution:
- Japanese Government
- ILO/Japan Fund for Building Social Safety Nets in Asia and the Pacific (SSN Fund)

### Duration:
April 2022 - March 2023

### Partners:
- Department of Employment (DoE) of Ministry of Labor and Social Welfare (MoLSW)
- Lao Federation of Trade Unions (LFTU)
- Lao National Chamber of Commerce and Industry (LNCCI)
- Public and Private Skill Development Institutes, TVET, BDS Providers, etc

### Target Beneficiaries
Returned migrants, aspiring entrepreneurs and MSMEs

### Geographic focus:
Vientiane Capital, Savannakhet, and Champasack

## About the Project

A survey conducted by UN Lao PDR among 350 SMEs (mainly in the retail sector) in six provinces in June 2020 found that 95% of interviewed firms were adversely affected by the crisis, of which 71% of the surveyed firms had to stop their operations.

Furthermore, the COVID-19 outbreaks in neighboring countries have resulted in major influxes of workers returning home as they lost their jobs, some temporarily and others permanently. Research conducted in 2020 on Lao PDR in the Time of COVID-19 by the World Bank indicated that over 200,000 Laotians working abroad had to return home in 2021, causing a projected decline of up to USD$125 million in remittances in 2020, an amount equivalent to 0.7% of GDP. This has had a significant negative impact on household incomes, social services, and the national economy.

Thus, the project will mainly focus and work on two areas of intervention, namely (1) facilitating returned migrant workers to take up existing wage employment opportunities and (2) supporting aspiring entrepreneurs, MSMEs and local economic development through strengthened local production and services. This directly links to the National Rural Employment Strategy of Lao PDR, and the UN COVID Response Action Plan to be adopted by the Lao Government. The Project supports COVID response and recovery not as a standalone measure, but as part of building an enabling environment for continued future income generation opportunities.

### Development Objectives
To support the Government of Lao PDR in the reintegration of returnee migrant workers, aspiring entrepreneurs and the revival of the MSME sector to generate better and more sustainable income and employment opportunities by strengthening local production and services in a number of key economic sectors as well as promoting COVID-19 preventive measures.

### Project Outcome
Increase opportunities for returned migrant workers (women and men) with productive wage employment through linkages with skill development, including COVID-19 preventive measures, existing wage employment and self-employment opportunities.




**Contact Information:**

Mr. Julien MAGNAT, Skill Specialist
Email: magnat@ilo.org

Ms. Anousone SOSENG INH, National Project Coordinator
Tel. 02099940456
Email: sosenginh@ilo.org



# ໂຄງການ ສ້າງໂອກາດມີວຽກເຮັດງານທຳໃຫ້ແຮງງານເຄື່ອນຍ້າຍກັບຄືນ ປະເທດ ແລະ ສາມາດເຊື່ອມໂຍງເຂົ້າໃນການພັດທະນາເສດຖະກິດທ້ອງຖິ່ນເພື່ອຕອບໂຕ້ຕໍ່ຜົນກະທົບຂອງພະຍາດໂຄວິດ-19

## ຂໍ້ມູນໂຄງການໂດຍຫຍໍ້

### ຜູ້ໃຫ້ທຶນ:

- ລັດຖະບານຍີ່ປຸ່ນ
- ກອງທຶນ ອົງການແຮງງານສາກົນ/ຍີ່ປຸ່ນ ສຳລັບການສ້າງເຄືອຄ່າຍຄວາມປອດໄພທາງສັງຄົມໃນອາຊີ ແລະ ປາຊີຟິກ (SSN Fund)

### ໄລຍະເວລາໂຄງການ:

ເດືອນເມສາ 2022 - ມີນາ 2023

### ຄູ່ຮ່ວມງານ:

- ກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ສະຫະພັນກຳມະບານລາວ
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
- ສະຖາບັນພັດທະນາສີມືແຮງງານພາກລັດ ແລະ ເອກະຊົນ, ສະຖາບັນການຝຶກອົບຮົມດ້ານວິຊາການ ແລະວິຊາຊີບ, ຜູ້ໃຫ້ບໍລິການທາງດ້ານການພັດທະນາທຸລະກິດ, ແລະ ອື່ນໆ

### ກຸ່ມເປົ້າຫມາຍ:

ແຮງງານເຄື່ອນຍ້າຍ, ຜູ້ທີ່ມີຄວາມຕ້ອງການຢາກເປັນຜູ້ປະກອບການ ແລະ ຈຸນລະວິສາຫະກິດ, ວິສາຫະກິດຂະຫນາດນ້ອຍ ແລະ ກາງ

### ແຂວງເປົ້າຫມາຍ:

ນະຄອນຫລວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ

## ກ່ຽວກັບໂຄງການ

ຜົນການສຳຫຼວດຂອງອົງການສະຫະປະຊາຊາດ ຫຼື ສປຊ ປະຈຳ ສປປ ລາວ ຈຳນວນ 350 ວິສາຫະກິດ SME (ຕົ້ນຕໍແມ່ນຂະແໜງຂາຍຍ່ອຍ) ໃນ 6 ແຂວງໃນເດືອນມິຖຸນາ 2020 ພົບວ່າ 95% ຂອງບໍລິສັດທີ່ສຳພາດໄດ້ຮັບຜົນກະທົບທາງລົບຈາກວິກິດພະຍາດໂຄວິດ-19, ໃນນັ້ນ 71% ຂອງບໍລິສັດທີ່ຖືກສຳຫຼວດຕ້ອງຢຸດເຊົາການດຳເນີນທຸລະກິດ.

ນອກຈາກນັ້ນ, ການລະບາດຂອງພະຍາດໂຄວິດ-19 ໃນປະເທດເພື່ອນບ້ານໄດ້ສົ່ງຜົນໃຫ້ຄົນງານຈຳນວນຫຼວງຫຼາຍກັບຄືນບ້ານຍ້ອນວ່າເຂົາເຈົ້າຂາດວຽກເຮັດງານທຳ, ບາງຄົນກໍ່ຊົ່ວຄາວ ແລະ ບາງຄົນກໍ່ຖາວອນ. ຈາກຜົນການຄົ້ນຄວ້າກ່ຽວກັບ ສປປ ລາວ ໃນປີ 2020 ໃນໄລຍະເກີດພະຍາດໂຄວິດ-19 ໂດຍທະນາຄານໂລກ ລະບຸວ່າ ມີຊາວລາວທີ່ໄປເຮັດວຽກຢູ່ຕ່າງປະເທດຫຼາຍກວ່າ 200,000 ຄົນ ຕ້ອງໄດ້ກັບຄືນປະເທດໃນປີ 2021, ເຮັດໃຫ້ການສົ່ງເງິນກັບບ້ານ ຫຼຸດລົງເຖິງ 125 ລ້ານໂດລາສະຫະລັດ ໃນປີ 2020, ເຊິ່ງເງິນຈຳນວນນີ້ແມ່ນເທົ່າກັບ 0.7% ຂອງ GDPຂອງປະເທດ. ສິ່ງດັ່ງກ່າວໄດ້ສົ່ງຜົນກະທົບທາງລົບຕໍ່ລາຍຮັບຂອງຄົວເຮືອນ, ການບໍລິການສັງຄົມ, ແລະເສດຖະກິດແຫ່ງຊາດ.

ເມື່ອເຫັນເຖິງບັນຫາດັ່ງກ່າວ, ໂຄງການນີ້ແມ່ນຈະສຸມໃສ່ ແລະ ເຮັດວຽກເປັນຕົ້ນຕໍໃນ 2 ດ້ານຄື: (1) ອຳນວຍຄວາມສະດວກໃຫ້ແຮງງານເຄື່ອນຍ້າຍສາມາດມີໂອກາດກັບຄືນສູ່ການຈ້າງງານທີ່ໄດ້ຮັບຄ່າຈ້າງ ແລະ (2) ສະໜັບສະໜູນຜູ້ປະກອບການ, MSMEs ແລະ ພັດທະນາເສດຖະກິດທ້ອງຖິ່ນໂດຍຜ່ານການຜະລິດ ແລະ ສ້າງການບໍລິການທ້ອງຖິ່ນໃຫ້ເຂັ້ມແຂງ. ເຊິ່ງຈຸດນີ້ ແມ່ນ ເຊື່ອມໂຍງໂດຍກົງກັບຍຸດທະສາດການຈ້າງງານໃນເຂດຊົນນະບົດແຫ່ງຊາດຂອງ ສປປ ລາວ, ແລະ ແຜນປະຕິບັດງານຂອງສະຫະປະຊາຊາດໃນການຮັບມືກັບພະຍາດໂຄວິດ ທີ່ຮັບຮອງເອົາໂດຍລັດຖະບານລາວ. ພ້ອມນີ້ ໂຄງການຍັງຈະສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃນການຮັບມືກັບພະຍາດ COVID-19 ແລະ ຟື້ນຟູສະພາບເສດຖະກິດ ແລະ ສັງຄົມ ຄຽງຄູ່ກັບການຊ່ວຍເຫລືອອື່ນໆ, ເພື່ອເປັນສ່ວນຫນຶ່ງຂອງການສ້າງສະພາບແວດລ້ອມທີ່ເຫມາະສົມໃນການການສ້າງໂອກາດໃນການສ້າງລາຍຮັບໃນອະນາຄົດ.

### ເປົ້າໝາຍການພັດທະນາ

ສະໜັບສະໜູນ ແລະ ໃຫ້ການຊ່ວຍເຫລືອແຮງງານເຄື່ອນຍ້າຍກັບຄືນປະເທດ, ຜູ້ປະກອບການ ແລະ ຟື້ນຟູຂະແໜງ MSME ໃຫ້ກັບຄືນມາມີສ່ວນຮ່ວມໃນເສດຖະກິດ, ເພື່ອສ້າງລາຍຮັບ ແລະ ໂອກາດການຈ້າງງານທີ່ດີກ ແລະ ຍືນຍົງກວ່າເກົ່າ ໂດຍການເສີມຂະຫຍາຍການຜະລິດ ແລະ ການບໍລິການທ້ອງຖິ່ນໃນຫຼາຍຂະແໜງເສດຖະກິດທີ່ສຳຄັນພ້ອມກັບສົ່ງເສີມມາດຕະການປ້ອງກັນ COVID-19.

### ຄາດຫມາຍຜົນໄດ້ຮັບ

ເພີ່ມໂອກາດໃຫ້ແຮງງານເຄື່ອນທີ່ກັບຄືນປະເທດ ທັງຍິງ ແລະ ຊາຍ ດ້ວຍການສ້າງໂອກາດໃນການຈ້າງງານທີ່ມີຄ່າແຮງງານຜ່ານການພັດທະນາສີມືແຮງງານ, ການກຳນົດມາດຕະການປ້ອງກັນ COVID-19, ການຈ້າງງານທີ່ໄດ້ຮັບຄ່າຈ້າງ ແລະ ການໂອກາໃນການປະກອບອາຊີບອິດສະຫຼະ.




ຂໍ້ມູນຕິດຕໍ່:

ທ່ານ ຈູລ້ຽນ ແມັກນາ, ຜູ້ຊ່ຽວຊານດ້ານການສີມືແຮງງານ
ອີເມວ: magnat@ilo.org

ນາງ ອານຸສອນ ສໍແສງອິນ, ຜູ້ປະສານງານໂຄງການ
ໂທ. 02099940456
ອີເມວ: sosenginh@ilo.org